ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===0000===-----

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1726 /ອຄ.ກຂອ
ນະຄອນຫຼວງວຽງຈັນ, ວັນທີ 23/08/2012

# ລະບຽບການຊື້-ຂາຍໄມ້

– ອີງຕາມ ຄຳສັ່ງເລກທີ 17/ນຍ, ລົງວັນທີ 22 ກັນຍາ 2012 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.

– ອີງຕາມ ຂໍ້ຕົກລົງເລກທີ 32/ນຍ, ລົງວັນທີ 06 ມີນາ 2012 ວ່າດ້ວຍການຮັບ ຮອງເອົາຍັດຕິກອງປະຊຸມການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ຄັ້ງວັນທີ 25-26 ມັງກອນ 2012.

– ອີງຕາມແຈ້ງການ ເລກທີ 1180/ອຄ.ຄພນ ລົງວັນທີ 19 ມິຖຸນາ 2012 ກ່ຽວກັບ ການຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ເລກທີ 32/ນຍ, ວ່າດວ້ຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ຄັ້ງວັນທີ 25-26 ມັງກອນ 2012.

ເພື່ອສືບຕໍ່ຜັນຂະຫຍາຍມະຕິກອງປະຊຸມໃຫ້ປະກົດຜົນເປັນຈິງຕາມທິດສົ່ງເສີມໃຫ້ການຄຸ້ມຄອງທຸລະກິດໄມ້ໃຫ້ມີຄວາມເຂັ້ມແຂງ, ຮັດກຸມ ເພື່ອຮັບປະກັນໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດ ລວມທັງລັດມີຜົນປະໂຫຍດສູງສຸດຈາກການດຳເນີນທຸລະກິດໃນຂະແໜງການດັ່ງກ່າວ.

## ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກລະບຽບການຊື້-ຂາຍໄມ້ ດັ່ງຕໍ່ໄປນີ້:

I. ເງື່ອນໄຂ ແລະ ພັນທະຂອງການຊື້-ຂາຍໄມ້:

1. ເງື່ອນໄຂຂອງຜູ້ເຂົ້າຮ່ວມປະມູນຊື້ໄມ້

1.1 ແມ່ນບໍລິສັດ/ໂຮງງານປຸງແຕ່ງໄມ້ ທີ່ຢູ່ ສປປ ລາວ ຫຼື ຢູ່ ຕ່າງປະເທດ ທີ່ມີທະບຽນວິສາຫະກິດດຳເນີນທຸລະກິດດ້ານການຜະລິດ ແລະ ປຸງແຕ່ງໄມ້ຖືກຕ້ອງ ຕາມລະບຽບກົດໝາຍ ຂອງ ສປປ ລາວ ຫຼື ປະເທດທີ່ກ່ຽວຂ້ອງ ຊຶ່ງຈະຕ້ອງໄດ້ຮັບການຢັ້ງຢືນຈາກ ອົງການທີ່ກ່ຽວຂ້ອງ ຫຼື ສະຖານທູດຂອງປະເທດຜູ້ກ່ຽວ;

1.2 ໃນກໍລະນີຊື້ໄມ້ທີ່ຂຸດຄົ້ນຈາກປ່າຜະລິດທີ່ມີການຈັດສັນແບບຍືນນານຕາມມາດຕະຖານຂອງສະພາບໍລິຫານປ່າໄມ້ສາກົນ (Forest Stewardship Council ຫຼື FSC) ຕ້ອງເປັນໂຮງງານປຸງແຕ່ງໄມ້ທີ່ໄດ້ຮັບການຢັ້ງຢືນລະບົບການຄຸ້ມຄອງແຫຼ່ງທີ່ມາຂອງໄມ້ແບບຕ່ອງໂສ້ (Chain of Custody ຫຼື CoC Certification);

1.3 ມີໃບຢັ້ງຢືນຖານະທາງດ້ານການເງິນ (Bank Statement) ຈາກທະນາຄານ;

1.4 ສຳລັບຜູ້ເຂົ້າຮ່ວມປະມູນທີ່ຢູ່ ສປປ ລາວ ຕ້ອງມີເງື່ອນໄຂເພີ່ມເຕີມດັ່ງລຸ່ມນີ້:

- ເປັນສະມາຊິກຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ແຫ່ງຊາດ ຫຼື ສະມາຄົມເຟີນີເຈີລາວ;
- ມີປະຫວັດການດຳເນີນທຸລະກິດທີ່ຈະແຈ້ງ, ບໍ່ເຄີຍຕິດໜີ້ພັນທະໄມ້ຂອງລັດມາກ່ອນ , ບໍ່ເຄີຍຖືກດຳເນີນຄະດີ, ກ່າວໂທດ ຫຼື ຖືກປັບໃໝຍ້ອນຝ່າຝືນກົດໝາຍປ່າໄມ້ ແລະ ກົດລະບຽບທີ່ກ່ຽວຂ້ອງ.

2. ການຊື້ໄມ້ທີ່ຂຸດຄົ້ນໃນເຂດໂຄງການພັດທະນາຕ່າງໆ

ເງື່ອນໄຂຂອງຜູ້ທີ່ຈະສາມາດເຂົ້າຮ່ວມປະມູນໄມ້ທີ່ຂຸດຄົ້ນໃນເຂດໂຄງການພັດທະນາຕ່າງໆ ໃຫ້ຖືເອົາຕາມເງື່ອນໄຂດັ່ງທີ່ໄດ້ກຳນົດໄວ້ໃນຂໍ້ I.1 ຂອງລະບຽບການສະບັບນີ້. ການປະມູນໄມ້ທີ່ຂຸດຄົ້ນໃນເຂດໂຄງການພັດທະນາຕ່າງໆ ແມ່ນຄະນະຊີ້ນຳ ແລະ ຄຸ້ມຄອງການຂຸດຄົ້ນໄມ້ໃນເຂດໂຄງການດັ່ງກ່າວ ເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດການຊື້-ຂາຍໄມ້.

3. ພັນທະຂອງຝ່າຍຊື້

3.1 ຝ່າຍຊື້ຕ້ອງຈ່າຍເງິນລ່ວງໜ້າຈຳນວນ 10% ຂອງມູນຄ່າທັງໝົດ ເພື່ອຄ້ຳປະກັນສັນຍາພາຍໃນ 5 ວັນລັດຖະການ ພາຍຫຼັງມື້ເຊັນສັນຍາຊື້ - ຂາຍໄມ້ ດ້ວຍການໂອນເງິນເຂົ້າບັນຊີຄັງເງິນແຫ່ງຊາດ, ໂດຍຜ່ານເລກບັນຊີດັ່ງນີ້:

| ລ/ດ | ຊື່ທະນາຄານທຸລະກິດຂອງລັດ | ບ/ຊ ສະກຸນເງິນກີບ | ບ/ຊ ສະກຸນເງິນໂດລາ | ບ/ຊ ສະກຸນເງິນບາດ |
|---|---|---|---|---|
| 1 | ພັດທະນາລາວ(LDB) | 0302000100000005 | 0302001100000006 | 0302002100000004 |
| 2 | ການຄ້າຕ່າງປະເທດ(BCEL) | 010.5.11.00.24682 | 010.7.11.01.19162 | 010.8.11.02.08214 |
| 3 | ສົ່ງເສີມກະສິກຳ (APB) | 0402.00.2121300.19.00000003 | 0402.01.2121300.19.00000002 | 0402.022121300.19.00000002 |

3.2 ຝ່າຍຊື້ຕ້ອງໂອນເງິນຊຳລະຄ່າພັນທະໄມ້ທີ່ຍັງເຫຼືອໃຫ້ຄົບ 100% ພາຍໃນ 15 ວັນລັດຖະການ, ຫຼັງຈາກມື້ທີ່ໄດ້ຮັບໃບໄລ່ລຽງຄ່າພັນທະໄມ້ ຈາກ ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ໃຫ້ໂອນເຂົ້າບັນຊີຄັງເງິນແຫ່ງຊາດ ໂດຍຜ່ານເລກບັນຊີດັ່ງນີ້:

| ລ/ດ | ຊື່ທະນາຄານທຸລະກິດຂອງລັດ | ບ/ຊ ສະກຸນເງິນກີບ | ບ/ຊ ສະກຸນເງິນ ໂດລາ | ບ/ຊ ສະກຸນເງິນ ບາດ |
|---|---|---|---|---|
| 1 | ພັດທະນາລາວ(LDB) | 0302000100000013 | 0302001100000007 | 0302002100000006 |
| 2 | ການຄ້າຕ່າງປະເທດ(BCEL) | 010.8.11.00.23927 | 010.4.11.01.00105 | 010.1.11.02.00017 |
| 3 | ສົ່ງເສີມກະສິກຳ (APB) | 0402.00.2121300.19.00000002 | 0402.01.2121300.19.00000001 | 0402.02.2121300.19.00000001 |

3.3 ຖ້າຝ່າຍຊື້ຫາກບໍ່ດຳເນີນການຊຳລະພາຍໃນ 15 ວັນລັດຖະການ ພາຍຫຼັງທີ່ໄດ້ຮັບໃບໄລ່ລຽງລາຄາພັນທະໄມ້, ຕ້ອງຖືກປັບໃໝ 20% ຂອງມູນຄ່າຄ້າງຊຳລະ ແລະ ຕໍ່ເວລາອີກ 05 ວັນລັດຖະການ. ຖ້າກາຍກຳນົດດັ່ງກ່າວຖືວ່າຝ່າຍຊື້ຈົງໃຈລະເມີດສັນຍາ, ຝ່າຍຂາຍສາມາດຍົກເລີກສັນຍາ ແລະ ຍຶດເງິນຄ້ຳປະກັນສັນຍາທີ່ໄດ້ຈ່າຍລ່ວງໜ້າເປັນຂອງລັດໂດຍບໍ່ມີເງື່ອນໄຂໃດໆມາຕໍ່ລອງອີກ;

3.4 ຝ່າຍຊື້ສາມາດຊຳລະຄ່າພັນທະໄມ້ເປັນເງິນກີບຕາມອັດຕາແລກປ່ຽນ ຂອງ ທະນາຄານ ແຫ່ງ ສປປ ລາວ ວາງອອກໃນມື້ຊຳລະ.

4. ພັນທະຂອງຝ່າຍຂາຍ:

ຝ່າຍຂາຍປະກອບມີຄະນະກຳມະການປະມູນຂາຍໄມ້ ຊຶ່ງມາຈາກ 3 ຂະແໜງການຄື: ກະສິກຳ ແລະ ປ່າໄມ້, ອຸດສາຫະກຳ ແລະ ການຄ້າ ແລະ ການເງິນ ແຂວງ, ນະຄອນຫຼວງ ເຊິ່ງເປັນຜູ້ຕາງໜ້າໃຫ້ ລັດ ໃນການປະມູນຂາຍໄມ້ຕາມພາລະບົດບາດຂອງຕົນທີ່ໄດ້ກຳນົດໄວ້ດັ່ງຕໍ່ໄປນີ້:

4.1 ກະສິກຳ ແລະ ປ່າໄມ້:

- ຄຸ້ມຄອງ ແລະ ຕິດຕາມກວດກາການຂຸດຄົ້ນໄມ້;
- ກໍລະນີຂາຍໄມ້ຢືນຕົ້ນທີ່ມີແຜນການຂຸດຄົ້ນອອກຈາກປ່າຜະລິດທີ່ມີການຈັດສັນແບບຍືນຍົງຕາມມາດຕະຖານຂອງສະພາບໍລິຫານປ່າໄມ້ສາກົນ (FSC) ແມ່ນໃຫ້ມອບບັນຊີໄມ້ດັ່ງກ່າວພ້ອມດ້ວຍເອກະສານທີ່ກ່ຽວຂ້ອງໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ເພື່ອດຳເນີນການຈັດຕັ້ງປະມູນຊື້-ຂາຍໄມ້ໃຫ້ທັນເວລາ;
- ວັດແທກ, ຂຶ້ນບັນຊີ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນຢູ່ສະໜາມ II ແລ້ວມອບບັນຊີໄມ້ໃຫ້ ອຸດສາຫະກຳ ແລະ ການຄ້າ ພ້ອມທັງມີການກວດກາບັນຊີ ແລະ ໄມ້ຕົວຈິງນຳກັນຢ່າງເປັນທາງການ;
- ຕີກາປ່ອຍໄມ້.

4.2 ອຸດສາຫະກຳ ແລະ ການຄ້າ:

- ຮັບເອົາບັນຊີໄມ້ຢືນຕົ້ນ ແລະ ເອກະສານກ່ຽວຂ້ອງຕ່າງໆ ຈາກ ພະແນກກະສິກຳ ແລະ ປ່າໄມ້ ເພື່ອດຳເນີນການຈັດຕັ້ງປະມູນຊື້-ຂາຍໄມ້;
- ກວດກາບັນຊີ ແລະ ຮັບເອົາໄມ້ທ່ອນຕົວຈິງຢູ່ສະໜາມ II;
- ເປັນເຈົ້າການໃນການຈັດປະມູນຊື້-ຂາຍໄມ້;
- ເຮັດສັນຍາຊື້-ຂາຍໄມ້ກັບຝ່າຍຊື້;
- ໄລ່ລຽງລາຄາພັນທະໄມ້ຕາມບັນຊີ, ປະເພດ, ຊະນິດ ແລະ ບໍລິມາດໄມ້.

4.3 ການເງິນ:

- ຈົດທະບຽນສັນຍາຊື້-ຂາຍໄມ້;
- ຮັບ ແລະ ຕິດຕາມການຊຳລະຄ່າພັນທະໄມ້ຈາກຝ່າຍຊື້.

## II. ຂັ້ນຕອນ ແລະ ວິທີການປະມູນຊື້-ຂາຍໄມ້:

### 1. ຂັ້ນຕອນການປະມູນ:

ການປະມູນຂາຍໄມ້ດຳເນີນເປັນສອງຂັ້ນຕອນຄື:

1.1 ຂັ້ນຕອນທີ 1: ຂັ້ນຕອນການກະກຽມຈັດຕັ້ງການປະມູນ, ພະແນກອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການໃນການກະກຽມຈັດຕັ້ງການປະມູນ, ກຳນົດມາດຖານ, ເງື່ອນໄຂຂອງຜູ້ເຂົ້າຮ່ວມການປະມູນ, ແຈ້ງລາຄາ, ຈຳນວນ, ປະເພດ ແລະ ຊະນິດໄມ້ ຢູ່ ສະໜາມ II (ກໍລະນີເປັນໄມ້ທ່ອນ) ຫຼື ໄມ້ຢືນຕົ້ນທີ່ສາມາດຕັດຂາຍໄດ້ ຢູ່ແຕ່ລະຈຸດ. ກຳນົດ ວັນ, ເວລາ ແລະ ສະຖານທີ່ຈັດຕັ້ງການປະມູນ, ການແຈ້ງເຊີນເຂົ້າຮ່ວມການປະມູນ ແລະ ອື່ນໆ.

1.2 ຂັ້ນຕອນທີ 2: ຂັ້ນຕອນຍື່ນເອກະສານເຂົ້າຮ່ວມການປະມູນຂອງຜູ້ຊື້. ຜູ້ຊື້ທີ່ມີມາດຖານ, ເງື່ອນໄຂທີ່ໄດ້ລະບຸໄວ້ໃນເອກະສານແຈ້ງເຊີນເຂົ້າຮ່ວມການປະມູນຕ້ອງຍື່ນເອກະສານສະເໜີເຂົ້າຮ່ວມການປະມູນ (ຊອງປະມູນ) ຕໍ່ຄະນະກຳມະການປະມູນຊື້-ຂາຍໄມ້ຕາມວັນ, ເວລາ ແລະ ສະຖານທີ່~~ໆໄດ້ກຳນົດໄວ້ເພື່ອ~~ໃຫ້ຄະນະກຳມະການປະມູນຊື້-ຂາຍໄມ້ໄດ້ພິຈາລະນາຄັດເລືອກເອົາຜູ້ທີ່ມີມາດຖານ, ເງື່ອນໄຂ, ຄຸນສົມບັດ, ຄວາມອາດສາມາດດ້ານຕ່າງໆ ແລະ ມີການສະເໜີລາຄາສູງສຸດ 5 ອັນດັບຕົ້ນໆ ເພື່ອເຊີນໃຫ້ເຂົ້າຮ່ວມການປະມູນຊື້ຂາຍໄມ້.

2. ວິທີການປະມູນຊື້-ຂາຍໄມ້:

ການປະມູນຂາຍໄມ້ ແມ່ນປະມູນເອົາມູນຄ່າສ່ວນເກີນຕາມບັນຊີໄມ້ (Log list) ແລະ ສາມາດປະຕິບັດໄດ້ສອງວິທີຄື: ແບບຊ້ອງໜ້າ ແລະ ແບບຍື່ນຊອງ ໂດຍໃຫ້ເລືອກເອົາໜຶ່ງໃນສອງວິທີເພື່ອຈັດຕັ້ງປະຕິບັດ.

2.1 ການປະມູນແບບຊ້ອງໜ້າແມ່ນຜູ້ທີ່ຖືກເຊີນເຂົ້າຮ່ວມການປະມູນຈະສະເໜີລາຄາປະມູນຂຶ້ນໂດຍກົງຢູ່ສະຖານທີ່ເປີດຊອງປະມູນ, ໂດຍອີງໃສ່ລາຄາສະເໜີສູງສຸດທີ່ໄດ້ສະເໜີໄວ້ໃນຊອງປະມູນເບື້ອງຕົ້ນມາເປັນບ່ອນອີງໃຫ້ແກ່ການປະມູນໃນຮອບນີ້ ຊຶ່ງລາຄາປະມູນເລີ່ມຕົ້ນດັ່ງກ່າວຈະຖືກແຈ້ງໃຫ້ຊາບ ໂດຍ ປະທານຄະນະກຳມະການປະມູນ. ການປະມູນຂາຍແບບຊ້ອງໜ້າຈະດຳເນີນໄປຈົນກວ່າບໍ່ມີຜູ້ ໃດສະເໜີຂຶ້ນລາຄາປະມູນຕື່ມອີກ. ຜູ້ທີ່ສະເໜີລາຄາປະມູນສູງສຸດຈະຖືເປັນຜູ້ຊະນະການປະມູນ.

2.2 ການປະມູນແບບຍື່ນຊອງ ແມ່ນຜູ້ທີ່ຖືກເຊີນເຂົ້າຮ່ວມການປະມູນຈະຕ້ອງສະເໜີລາຄາປະມູນ ດ້ວຍການຂຽນລາຄາລົງໃນຊອງປະມູນແລ້ວມອບໃຫ້ຄະນະກຳການປະມູນໄມ້ເພື່ອອ່ານຊ້ອງໜ້າຜູ້ເຂົ້າຮ່ວມປະມູນທັງໝົດ. ລາຄາປະມູນແມ່ນອີງໃສ່ລາຄາສະເໜີສູງສຸດທີ່ໄດ້ສະເໜີໄວ້ໃນຊອງປະມູນເບື້ອງຕົ້ນມາເປັນບ່ອນອີງໃຫ້ແກ່ການປະມູນໃນຮອບນີ້ ຊຶ່ງປະທານຄະນະກຳມະການປະມູນຈະເປັນຜູ້ແຈ້ງລາຄາປະມູນໃຫ້ຜູ້ປະມູນຮັບຊາບ. ການປະມູນແບບນີ້ຈະຖືເອົາຜູ້ທີ່ສະເໜີລາຄາສູງສຸດເປັນຜູ້ຊະນະການປະມູນ.

III. ຂັ້ນຕອນການເຮັດສັນຍາ, ການຊຳລະຄ່າພັນທະໄມ້:

1. ຂັ້ນຕອນການເຮັດສັນຍາ:

ພາຍຫຼັງສຳເລັດການປະມູນ, ພາຍໃນກຳນົດເວລາ 05 ວັນລັດຖະການ,ຜູ້ຊະນະການປະມູນ ຕ້ອງມາເຊັນສັນຍາຊື້ - ຂາຍໄມ້ ກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ. ແລ້ວນຳສັນຍາຊື້-ຂາຍດັ່ງກ່າວໄປຈົດທະບຽນ ຢູ່ ພະແນກການເງິນ. ຫຼັງຈາກນັ້ນ, ຜູ້ຊື້ຕ້ອງນຳສົ່ງສັນຍາຊື້-ຂາຍ ໃຫ້ ພະແນກກະສິກຳ ແລະ ປ່າໄມ້, ພະແນກອຸດສາຫະກຳ ແລະ ການຄ້າ ແລະ ພະແນກການເງິນ ບ່ອນລະ 01 ສະບັບ ເພື່ອຮັບຮູ້ ແລະ ເປັນເອກະພາບກັນໃນການຄຸ້ມຄອງ ແລະ ຕິດຕາມການ ຈັດຕັ້ງປະຕິບັດ.

2. ຂັ້ນຕອນການຊຳລະຄ່າພັນທະໄມ້:

2.1 ກໍລະນີຂາຍເປັນໄມ້ທ່ອນຢູ່ສະໜາມ II:

ພາຍຫຼັງທີ່ເຊັນສັນຍາ, ພະແນກອຸດສາຫະກຳ ແລະ ການຄ້າ ຈະໄລ່ລຽງຄ່າພັນທະໄມ້ໂດຍອີງໃສ່ລາຄາທີ່ໄດ້ຕົກລົງເຊັນສັນຍາຊື້ຂາຍກັນຕົວຈິງ, ຊະນິດ, ປະເພດ ແລະ ບໍລິມາດໄມ້ໃນບັນຊີໄມ້ (Log list). ແລ້ວແຈ້ງໃຫ້ ຝ່າຍຊື້ ຊາບທັນທີ ເພື່ອດຳເນີນການຊຳລະສະສາງ, ພ້ອມທັງເຮັດສະໂນດນຳສົ່ງໃບໄລ່ລຽງຄ່າພັນທະໄມ້ໃຫ້ ພະແນກການເງິນ ເພື່ອຕິດຕາມການຊຳລະສະສາງ ໂດຍອີງໃສ່ກຳນົດເວລາທີ່ໄດ້ລະບຸໄວ້ໃນຂໍ້ 3.1 ແລະ 3.2 ຂອງລະບຽບການສະບັບນີ້. ຝ່າຍຊື້ຕ້ອງຊຳລະຄ່າພັນທະໄມ້ໃຫ້ຄົບຖ້ວນ 100% ຕາມໃບໄລ່ລຽງຄ່າພັນທະໄມ້ ຢູ່ ຂະແໜງການເງິນ ພ້ອມທັງສຳເນົາ ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ເພື່ອຮັບຊາບ ແລະ ຕິດຕາມ ການຈັດຕັ້ງປະຕິບັດ.

2.2 ກໍລະນີຂາຍເປັນໄມ້ຢືນຕົ້ນ (ໄມ້ທີ່ຂຸດຄົ້ນອອກຈາກເຂດປ່າຜະລິດທີ່ມີການຈັດສັນແບບຍືນນານຕາມມາດຕະຖານຂອງສະພາບໍລິຫານປ່າໄມ້ສາກົນ):

ພາຍຫຼັງທີ່ ຜູ້ຊະນະການປະມູນ ໄດ້ເຮັດສັນຍາຊື້ຂາຍກັບ ພະແນກ ອຸດສາຫະກຳ ແລະ ການຄ້າ ແລ້ວ. ຜູ້ຊື້ຕ້ອງໄດ້ຈ່າຍເງິນລ່ວງໜ້າຈຳນວນ 10% ຂອງມູນຄ່າທັງໝົດ ເພື່ອຄໍ້າ ປະກັນສັນຍາຕາມທີ່ໄດ້ລະບຸໄວ້ໃນຂໍ້ທີ 3.1 ຂອງລະບຽບການສະບັບນີ້. ພາຍຫຼັງທີ່ໄມ້ດັ່ງກ່າວໄດ້ຖືກຂຸດຄົ້ນ ແລະ ຂົນສົ່ງມາໄວ້ຢູ່ສະໜາມ II ແລ້ວ,

ພະແນກກະສິກຳ ແລະ ປ່າໄມ້ ຕ້ອງໄດ້ວັດແທກ, ຈັດຊັ້ນຄຸນນະພາບ ແລະ ຂຶ້ນບັນຊີໄມ້ (Log list) ດັ່ງກ່າວ ແລ້ວມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ເພື່ອດຳເນີນການໄລ່ລຽງຄ່າພັນທະໄມ້ໂດຍອີງໃສ່ລາຄາທີ່ໄດ້ຕົກລົງເຊັນສັນຍາຊື້ຂາຍກັນຕົວຈິງ, ຊະນິດ, ປະເພດ ແລະ ບໍລິມາດຕົວຈິງຢູ່ໃນບັນຊີໄມ້ດັ່ງກ່າວ. ແລ້ວແຈ້ງໃຫ້ ຝ່າຍຊື້ ຊາບທັນທີ ເພື່ອດຳເນີນການຊຳລະສະສາງ, ພ້ອມທັງເຮັດສະໂນດນຳສົ່ງໃບໄລ່ລຽງຄ່າພັນທະໄມ້ໃຫ້ ພະແນກການເງິນ ເພື່ອຕິດຕາມການຊຳລະສະສາງ ໂດຍອີງໃສ່ກຳນົດເວລາທີ່ໄດ້ລະບຸ ໄວ້ໃນຂໍ້ 3.2 ຂອງລະບຽບການສະບັບນີ້. ຝ່າຍຊື້ຕ້ອງຊຳລະຄ່າພັນທະໄມ້ໃຫ້ຄົບຖ້ວນ 100% ຕາມໃບໄລ່ລຽງຄ່າພັນທະໄມ້ຢູ່ ຂະແໜງການເງິນ ແລະ ສຳເນົາ ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແລະ ພະແນກອຸດສາຫະ ກຳ ແລະ ການຄ້າ ເພື່ອຮັບຊາບ ແລະ ຕິດຕາມການຈັດຕັ້ງປະຕິບັດ.

IV. <u>ການຈັດຕັ້ງປະຕິບັດ:</u>

1. ໄມ້ທີ່ມີການຊື້-ຂາຍຕາມສັນຍາ ແມ່ນປະຕິບັດຕາມແຜນການຂຸດຄົ້ນໄມ້ທີ່ ລັດຖະບານ ໄດ້ອະນຸມັດໃຫ້ຈັດຕັ້ງປະຕິບັດໃນແຕ່ລະສົກປີ. ຖ້າຫາກປະຕິບັດບໍ່ສຳເລັດໃຫ້ລົບລ້າງ ແລະ ບໍ່ອະນຸຍາດໃຫ້ນຳໄປຈັດຕັ້ງປະຕິບັດໃນສົກປີຕໍ່ໄປຢ່າງເດັດຂາດ.
2. ທຸກການຊື້-ຂາຍໄມ້ ໃນເງື່ອນໄຂທີ່ນອກເໜືອຈາກລະບຽບການຊື້-ຂາຍໄມ້ສະບັບນີ້ ຈະຕ້ອງໄດ້ຮັບການອະນຸມັດເປັນລາຍລັກອັກສອນ ຈາກ ກະຊວງອຸດສາຫະກຳ ແລະ ການຄ້າ
3. ລະບຽບການຊື້-ຂາຍໄມ້ສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນສະບັບເລກທີ 1863/ອຄ.ກຂອ, ລົງວັນທີ 05 ພະຈິກ 2008

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ກະຊວງອຸດສາຫະກຳແລະ... ລັດຖະມົນຕີ

ດຣ. ນາມ ວິຍະເກດ